ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 2673/ກງ

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2025

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມນະໂຍບາຍເສດຖະກິດ ແລະ ການເງິນ

- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 538/ນຍ, ລົງວັນທີ 21 ສິງຫາ 2025;
- ອີງຕາມ ການຄົ້ນຄວ້າຂອງຄະນະປັບປຸງກົງຈັກການຈັດຕັ້ງຂອງຂະແໜງການເງິນ ແລະ ໜັງສືລາຍງານ ຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1432/ ກຈພ, ລົງວັນທີ 24 ກໍລະກົດ 2025.

## ລັດຖະມົນຕີ ກະຊວງການເງິນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມນະໂຍບາຍເສດຖະກິດ ແລະ ການເງິນ ແນໃສ່ຈັດຕັ້ງປະຕິບັດວຽກງານ ນະໂຍບາຍເສດຖະກິດ ແລະ ການເງິນ ໃຫ້ມີ ປະສິດທິພາບ ແລະ ປະສິດທິຜົນສູງ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກົມນະໂຍບາຍເສດຖະກິດ ແລະ ການເງິນ ຂຽນເປັນຕົວອັກສອນຫຍໍ້ວ່າ: **“ກນສງ”** ເປັນພາສາອັງກິດວ່າ: Economic and Fiscal Policy Department (**EFPD**) ແມ່ນກົງຈັກໜຶ່ງຂອງກະຊວງການເງິນ, ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະພັກ-ຄະນະນຳຂອງກະຊວງການເງິນ ກໍ່ຄືລັດຖະບານ ໃນການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ ໃນການຄົ້ນຄວ້າ ຍຸດທະສາດ, ແຜນແມ່ບົດ, ນະໂຍບາຍການພັດທະນາ ແລະ ມາດຕະການ ລວມທັງ ຕິດຕາມ-ປະເມີນການຈັດຕັ້ງປະຕິບັດ ວຽກງານໃນຂົງເຂດການພັດທະນາເສດຖະກິດແຫ່ງຊາດ, ການຄຸ້ມຄອງເສດຖະກິດມະຫາພາກ ແລະ ການເງິນແຫ່ງລັດ ໃນແຕ່ລະໄລຍະ, ພ້ອມທັງ ລົງເລິກຄົ້ນຄວ້າຫົວຂໍ້ຕ່າງໆທີ່ຕິດພັນກັບຂົງເຂດການຮ່ວມມື-ພັດທະນາ, ຄຸ້ມຄອງເສດຖະກິດ ແລະ ການເງິນ ຕາມການມອບໝາຍຂອງຄະນະນຳກະຊວງການເງິນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກົມນະໂຍບາຍເສດຖະກິດ ແລະ ການເງິນ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ; ວິໄສທັດ, ຍຸດທະສາດ ກ່ຽວກັບວຽກງານ ການພັດທະນາ, ຄຸ້ມຄອງເສດຖະກິດ ແລະ ການເງິນ ຕາມພາລະບົດບາດຂອງຕົນ ມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ;
2. ຄົ້ນຄວ້າ, ຕິດຕາມ ແລະ ປະເມີນທ່າອ່ຽງ, ຄວາມສ່ຽງຂອງເສດຖະກິດມະຫາພາກທັງພາຍໃນ ແລະ ສາກົນໃນແຕ່ລະໄລຍະ ເພື່ອນຳສະເໜີບັນດານະໂຍບາຍ, ມາດຕະການໃນການກຽມພ້ອມກັບສະພາບການປ່ຽນແປງທີ່ອາດສົ່ງຜົນກະທົບຕໍ່ສະພາບເສດຖະກິດມະຫາພາກຂອງປະເທດ, ປະກອບສ່ວນຕໍ່ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
3. ຄົ້ນຄວ້າການປະຕິຮູບ, ການຫັນປ່ຽນໂຄງສ້າງເສດຖະກິດ, ກົນໄກການຄຸ້ມຄອງ ແລະ ຮູບແບບການຂະຫຍາຍຕົວຂອງເສດຖະກິດທີ່ຮັບປະກັນໄດ້ຄຸນນະພາບ, ການຂຸດຄົ້ນທ່າແຮງບົ່ມຊ້ອນ ແລະ ຄວາມອາດສາມາດໃຫ້ກາຍເປັນຂະແໜງການເສດຖະກິດປາຍແຫຼມ ແລະ ຮູບແບບການສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງ, ຮູບແບບການພັດທະນາແລວທາງເສດຖະກິດ, ເຂດຈຸດສຸມການພັດທະນາເສດຖະກິດ, ເຂດເສດຖະກິດຊາຍແດນ ແລະ ອື່ນໆ;
4. ຄົ້ນຄວ້າປະສິດທິພາບ ແລະ ປະສິດທິຜົນຂອງການນຳໃຊ້ແຫຼ່ງທຶນພັດທະນາ ເພື່ອສະໜອງຂໍ້ມູນ ແລະ ຄຳແນະນຳດ້ານນະໂຍບາຍໃນການຈັດຕັ້ງປະຕິບັດ ເພື່ອຊຸກຍູ້ການຂະຫຍາຍຕົວເສດຖະກິດແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ;
5. ຄົ້ນຄວ້າ ແລະ ສະເໜີມາດຕະການແກ້ໄຂ ຕໍ່ກັບບັນດາຫົວຂໍ້ຕ່າງໆ ຕິດພັນກັບການແກ້ໄຂຄວາມຫຍຸ້ງດ້ານເສດຖະກິດ ແລະ ການເງິນ ຕາມການມອບໝາຍຂອງຄະນະນຳກະຊວງການເງິນ;
6. ຄົ້ນຄວ້າຮູບແບບການພັດທະນາຂອງ ສປປ ລາວ ທີ່ຕິດພັນກັບວາລະການພັດທະນາສາກົນ ແລະ ພາກພື້ນ ເຊັ່ນ: ການພັດທະນາແບບຍືນຍົງ, ການພັດທະນາເສດຖະກິດສີຂຽວ, ການພັດທະນາເສດຖະກິດໝູນວຽນ, ການພັດທະນາທຶນມະນຸດ, ປະຊາກອນແລະການພັດທະນາແລະ ອື່ນໆ ເພື່ອສະໜັບສະໜູນຕໍ່ການສ້າງຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນພັດທະນາຂະແໜງການເງິນແຫ່ງລັດໃນແຕ່ລະໄລຍະ;
7. ໂຄສະນາເຜີຍແຜ່ ແນວທາງ, ມະຕິ, ຄຳສັ່ງ, ກົດໝາຍ ທີ່ຕິດພັນກັບນະໂຍບາຍເສດຖະກິດ ແລະ ການເງິນໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທົ່ວສັງຄົມ ເພື່ອຮັບຮູ້, ເຊື່ອມຊຶມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;
8. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ວິໄສທັດ, ຍຸດທະສາດ ແລະ ນະໂຍບາຍການເງິນ ໄລຍະກາງ ແລະ ໄລຍະຍາວ, ແຜນພັດທະນາ ແລະ ແຜນປະຕິຮູບ ຂະແໜງການເງິນ ເພື່ອສະເໜີລັດຖະມົນຕີ ພິຈາລະນາ;
9. ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຍຸດທະສາດ ພັດທະນາການເງິນແຫ່ງລັດ ໃນແຕ່ລະໄລຍະ;
10. ຄົ້ນຄວ້າ, ວິເຄາະ, ວິໄຈຂໍ້ມູນ ແລະ ຄາດຄະເນ ສະພາບດ້ານການເງິນ-ງົບປະມານແຫ່ງລັດ ໃນແຕ່ລະໄລຍະ ແລ້ວກຳນົດ ນະໂຍບາຍ, ມາດຕະການ ທາງດ້ານການເງິນ-ງົບປະມານແຫ່ງລັດ ເພື່ອສະເໜີລັດຖະມົນຕີ ພິຈາລະນາ;
11. ໃຫ້ຄຳປຶກສາ, ເຂົ້າຮ່ວມ ວິໄຈ ແລະ ມີຄຳເຫັນ ຢັ້ງຢືນທາງດ້ານວິທະຍາສາດເສດຖະກິດ-ການເງິນໃນການວາງວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາຂອງກົມລາຍຮັບ-ລາຍຈ່າຍ ແລະ ຂອງກົມປົ່ນອ້ອມ ຕາມວິໄສທັດ ແລະ ຍຸດທະສາດພັດທະນາການເງິນແຫ່ງລັດ ໃນແຕ່ລະໄລຍະ;
12. ພົວພັນ, ຮ່ວມມື, ປະສານງານກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ພາກພື້ນ ກ່ຽວກັບວຽກງານນະໂຍບາຍການເງິນ ແລະ ການປະເມີນສະພາບເສດຖະກິດ-ການເງິນ ຂອງ ສປປ ລາວ ໃນແຕ່ລະໄລຍະ;

13. ຕິດຕາມ, ວິເຄາະ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ວຽກງານເສດຖະກິດ-ການເງິນ ເພື່ອສະເໜີລັດຖະມົນຕີ ພິຈາລະນາ;
14. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນະໂຍບາຍການເງິນ ໃນຂົງເຂດລາຍຮັບ ແລະ ສະສົມ, ປະຢັດທົ່ວສັງຄົມ ເພື່ອສະເໜີ ລັດຖະມົນຕີ ພິຈາລະນາ;
15. ຄຸ້ມຄອງການປະຕິບັດນະໂຍບາຍທາງດ້ານພາສີ-ອາກອນ ແລະ ນະໂຍບາຍທີ່ບໍ່ແມ່ນພາສີ-ອາກອນ ທີ່ຕິດພັນກັບນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງ ການຄຸ້ມຄອງການປະຕິບັດນະໂຍບາຍທີ່ນອກເໜືອຈາກກົດໝາຍກຳນົດ;
16. ເປັນເຈົ້າການຄົ້ນຄວ້າ ແລະ ກຳນົດ ນະໂຍບາຍ, ຕິດຕາມ ແລະ ປະເມີນ ການຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ-ອາກອນ, ຄ່າຊັບພະຍາກອນທຳມະຊາດ, ຄ່າພາກຫຼວງ, ຄ່າເຊົ່າ, ຄ່າສຳປະທານ, ຄ່າທຳນຽມ ແລະ ຄ່າບໍລິການ ຂອງກິດຈະການ, ໂຄງການລົງທຶນຕ່າງໆເພື່ອສົ່ງເສີມການລົງທຶນ ພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ, ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ໄປຕາມບູລິມາສິດຂອງລັດຖະບານ ໃນແຕ່ລະໄລຍະ;
17. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນະໂຍບາຍການເງິນ ໃນຂົງເຂດລາຍຈ່າຍ ແລະ ການລົງທຶນ; ນະໂຍບາຍລາຍຈ່າຍຂອງ ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ ແລະ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຂົງເຂດອື່ນ ເປັນຕົ້ນ: ເງິນເດືອນ, ເງິນອຸດໜູນ, ເງິນປະກັນສັງຄົມ ແລະ ເງິນນະໂຍບາຍອື່ນ;
18. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນິຕິກຳ ກ່ຽວກັບ ການຄົ້ນຄວ້າ, ກຳນົດ ແລະ ຈັດຕັ້ງປະຕິບັດ ນະໂຍບາຍລາຍຮັບ-ລາຍຈ່າຍງົບປະມານ ແລະ ນິຕິກຳອື່ນ ຕາມການຕົກລົງຂອງລັດຖະມົນຕີ ໃນແຕ່ລະໄລຍະ;
19. ສັງລວມ ແລະ ສ້າງຖານຂໍ້ມູນສະຖິຕິດ້ານການພັດທະນາເສດຖະກິດ, ການຄຸ້ມຄອງຄຸ້ມເສດຖະກິດມະຫາພາກ ແລະ ການເງິນແຫ່ງລັດ ເພື່ອການຄົ້ນຄວ້ານະໂຍບາຍ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ດັ່ງກ່າວ ຕາມລະບຽບການ;
20. ສ້າງບົດລາຍງານສະຖິຕິດ້ານເສດຖະກິດ ແລະ ການເງິນແຫ່ງລັດ ຕາມມາດຖານສາກົນ, ປື້ມຈົດໝາຍເຫດສະຫຼຸບການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ ແລະ ຈັດພິມເຜີຍແຜ່ ຕໍ່ພາຍນອກ ຕາມລະບຽບການ;
21. ຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າດ້ານວິຊາການ ຂອງບັນດາອົງການຈັດຕັ້ງ ແລະ ສະຖາບັນຄົ້ນຄວ້າດ້ານເສດຖະກິດ ແລະ ການເງິນສາກົນ ທີ່ກ່ຽວຂ້ອງກັບວຽກງານນະໂຍບາຍເສດຖະກິດ ແລະ ການເງິນ; ລວມທັງວຽກງານຕິດຕາມ-ປະເມີນຜົນການຈັດຕັ້ງປະຕິບັດວຽກງານຕ່າງໆທີ່ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ.
22. ຈັດຕັ້ງການຝຶກອົບຮົມ ແລະ ແລກປ່ຽນດ້ານວິຊາການດ້ານການຄົ້ນຄວ້າ ແລະ ວິໄຈຂໍ້ມູນ-ສະຖິຕິທີ່ຕິດພັນກັບການຄົ້ນຄວ້າ ແລະ ປະເມີນແຜນຍຸດທະສາດ, ແຜນການ, ນະໂຍບາຍ ແລະ ມາດຕະການດ້ານເສດຖະກິດ ແລະ ການເງິນແຫ່ງລັດ;
23. ຄົ້ນຄວ້າ ແລະ ສະເໜີ ປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ ແລະ ມາດຕະຖານຕຳແໜ່ງງານຂອງພະນັກງານນຳພາ-ຄຸ້ມຄອງ, ການບັນຈຸສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປະເມີນຜົນ, ກໍ່ສ້າງ-ບຳລຸງ, ຝຶກອົບຮົມ-ພັດທະນາ ແລະ ປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ວິໄນ ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມລະບຽບການ;
24. ຄົ້ນຄວ້າ, ສັງລວມ, ສ້າງແຜນ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ພາຫະນະ, ວັດຖຸປະກອນ, ຊັບສົມບັດຂອງລັດ ແລະ ຊັບສິນອື່ນ ເຂົ້າໃນການເຄື່ອນໄຫວວຽກງານຂອງກົມ ຕາມການແບ່ງປັນຂອງກະຊວງການເງິນ ຕາມລະບຽບການ;
25. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນພາຍໃຕ້ການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;

26. ສ້າງແຜນດໍາເນີນງານການເຄື່ອນໄຫວວຽກງານ ແລະ ສະຫຼຸບລາຍງານການປະຕິບັດວຽກງານຂອງກົມ ເປັນປົກກະຕິ ປະຈໍາ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈໍາປີ ຕາມລະບຽບການ;
27. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

**ມາດຕາ 4 ຂອບເຂດສິດ**

ກົມນະໂຍບາຍເສດຖະກິດ ແລະ ການເງິນ ມີຂອບເຂດສິດດັ່ງນີ້:

1. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ວິໄສທັດ, ຍຸດທະສາດ ແລະ ນະໂຍບາຍເສດຖະກິດ ແລະ ການເງິນ ໄລຍະກາງ ແລະ ໄລຍະຍາວ, ແຜນພັດທະນາ ແລະ ແຜນປະຕິຮູບດ້ານເສດຖະກິດ ແລະ ການເງິນແຫ່ງລັດ, ມາດຕະການຄຸ້ມຄອງເສດຖະກິດ, ແກ້ໄຂສະພາບຄວາມຫຍຸ້ງຍາກເສດຖະກິດ ແລະ ການເງິນ ໃນແຕ່ລະໄລຍະ ເພື່ອສະເໜີ ຄະນະພັກ-ຄະນະນໍາກະຊວງການເງິນ ພິຈາລະນາ;
2. ສະເໜີ ຫ້ອງການ ພິຈາລະນາ ອອກແຈ້ງການ ເຖິງ ຫ້ອງການຂອງ ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສະໜອງຂໍ້ມູນກ່ຽວກັບ ນິຕິກໍາ ແລະ ການຈັດຕັ້ງປະຕິບັດຂອງຕົນ ເພື່ອເປັນບ່ອນອີງໃນການຄົ້ນຄວ້າ, ປະເມີນຜົນນິຕິກໍາຂອງຂະແໜງການເສດຖະກິດ ແລະ ການເງິນ;
3. ສະເໜີ ລັດຖະມົນຕີ ພິຈາລະນາ ອອກແຈ້ງການ ເຖິງ ບັນດາກະຊວງ, ອົງການລັດທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ແລະ ບັນດາກົມອ້ອມຂ້າງຂອງກະຊວງການເງິນ ເປັນເຈົ້າການຄົ້ນຄວ້າ ສ້າງ ແລະ ປັບປຸງ ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ກົນໄກການຈັດຕັ້ງປະຕິບັດ ຕາມຜົນຂອງການປະເມີນຜົນນິຕິກໍາຂອງຂະແໜງການເງິນ;
4. ສະເໜີລັດຖະມົນຕີ ພິຈາລະນາ ອອກແຈ້ງການ ຫຼື ຄໍາສັ່ງ ເຖິງ ບັນດາກະຊວງ, ອົງການລັດທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ແລະ ບັນດາກົມອ້ອມຂ້າງຂອງກະຊວງການເງິນ ຢຸດຕິການຈັດຕັ້ງປະຕິບັດບັນດານະໂຍບາຍ, ມາດຕະການ ທີ່ບໍ່ສອດຄ່ອງທາງດ້ານນິຕິກໍາ ແລະ ມີຜົນກະທົບຕໍ່ເສດຖະກິດ ແລະ ການເງິນ;
5. ຊຸກຍູ້, ເລັ່ງທວງ ບັນດາກົມອ້ອມຂ້າງຂອງກະຊວງການເງິນ, ບັນດາກະຊວງ, ອົງການລັດທຽບເທົ່າ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ສະໜອງຂໍ້ມູນ-ສະຖິຕິ ກ່ຽວກັບ ການພັດທະນາ ແລະ ຄຸ້ມຄອງເສດຖະກິດ-ການເງິນ, ການເງິນ-ງົບປະມານ ແລະ ຂໍ້ມູນອື່ນໆ;
6. ເຂົ້າຮ່ວມໃນການຄົ້ນຄວ້າ ແລະ ຮ່ວມມືດ້ານວິຊາການ ຮ່ວມກັບຂະແໜງການ ແລະ ເຄືອຄ່າຍດ້ານວິຊາການທີ່ກ່ຽວຂ້ອງທັງພາຍໃນ ແລະ ສາກົນ;
7. ເຜີຍແຜ່ບັນດາຜົນການຄົ້ນຄວ້າ, ນິຕິກໍາ ແລະ ຂໍ້ມູນຂ່າວສານທີ່ຕິດພັນກັບນະໂຍບາຍເສດຖະກິດ ແລະ ການເງິນ ເພື່ອຊຸກຍູ້ວຽກງານຂອງກະຊວງ;
8. ຝຶກອົບຮົມ ແລະ ສ້າງຄວາມອາດສາມາດດ້ານວິຊາການໃຫ້ແກ່ພະນັກງານພາຍໃນ ແລະ ຂະແໜງການທີ່ກ່ຽວຂ້ອງ;
9. ເຊັນຢັ້ງຢືນເອກະສານທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ ຕາມກົດໝາຍ ແລະ ລະບຽບການ;
10. ສະເໜີ ປັບປຸງກົງຈັກການຈັດຕັ້ງ, ກໍານົດຕໍາແໜ່ງງານ ແລະ ມາດຕະຖານ ຂອງພະນັກງານນໍາພາ-ຄຸ້ມຄອງ, ການບັນຈຸສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ປະເມີນຜົນ, ກໍ່ສ້າງ-ບໍາລຸງ, ຝຶກອົບຮົມ-ພັດທະນາ, ປະຕິບັດນະໂຍບາຍ ຍ້ອງຍໍ ແລະ ວິໄນ ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງກົມ;
11. ຄຸ້ມຄອງ ແລະ ນໍາໃຊ້ ງົບປະມານ, ພາຫະນະ, ວັດຖຸປະກອນ, ຊັບສົມບັດຂອງລັດ ແລະ ຊັບສິນອື່ນ ເຂົ້າໃນການເຄື່ອນໄຫວວຽກງານຂອງກົມ ຕາມການແບ່ງປັນຂອງກະຊວງການເງິນ ຕາມລະບຽບການ;
12. ນໍາໃຊ້ສິດອື່ນ ຕາມການມອບໝາຍຂອງລັດຖະມົນຕີ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກົມນະໂຍບາຍເສດຖະກິດ ແລະ ການເງິນ ມີໂຄງປະກອບກົງຈັກ 07 ພະແນກ ດັ່ງນີ້:

1. ພະແນກ ນະໂຍບາຍຂະແໜງການເສດຖະກິດ;
2. ພະແນກ ນະໂຍບາຍສະຖຽນລະພາບເສດຖະກິດມະຫາພາກ;
3. ພະແນກ ນະໂຍບາຍການພັດທະນາ
4. ພະແນກ ນະໂຍບາຍການເງິນ;
5. ພະແນກ ນະໂຍບາຍລາຍຮັບ;
6. ພະແນກ ນະໂຍບາຍລາຍຈ່າຍ;
7. ພະແນກ ຂໍ້ມູນ-ສະຖິຕິ ເສດຖະກິດ ແລະ ການເງິນ;

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ກົມນະໂຍບາຍເສດຖະກິດ ແລະ ການເງິນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກົມ 01 ທ່ານ ມີຄວາມຮັບຜິດຊອບຕໍ່ ລັດຖະມົນຕີ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ; ໃນເວລາຫົວໜ້າກົມ ບໍ່ຢູ່ ຫຼື ໄປເຄື່ອນໄຫວວຽກງານທາງລັດຖະການ ພາຍໃນ ຫຼື ຕ່າງປະເທດ ຕ້ອງມອບສິດໃຫ້ ຮອງຫົວໜ້າກົມ ທ່ານໃດໜຶ່ງ ເປັນຜູ້ປະຈຳການແທນຢ່າງເປັນລາຍລັກອັກສອນ;
2. ຮອງຫົວໜ້າກົມ ຈຳນວນໜຶ່ງ ຊ່ວຍຫົວໜ້າກົມຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ; ຮັບຜິດຊອບຕໍ່ ຫົວໜ້າກົມ ກ່ຽວກັບ ຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ; ຮອງຫົວໜ້າກົມຜູ້ປະຈຳການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະປະຈຳການແທນ ໃຫ້ຫົວໜ້າກົມ ຮັບຊາບພາຍຫຼັງຫົວໜ້າກົມກັບມາປະຈຳການປົກກະຕິ;
3. ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

### ມາດຕາ 7 ພະແນກ ນະໂຍບາຍຂະແໜງການເສດຖະກິດ

ພະແນກ ນະໂຍບາຍຂະແໜງເສດຖະກິດ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງລັດ;
2. ຄົ້ນຄວ້າທ່າແຮງ ແລະ ຄວາມອາດສາມາດຂອງຂະແໜງເສດຖະກິດ ເພື່ອຊຸກຍູ້ການຂະຫຍາຍຕົວເສດຖະກິດໄລຍະສັ້ນ, ກາງ ແລະ ຍາວ;
3. ຄົ້ນຄວ້າຮູບແບບການຂະຫຍາຍຕົວເສດຖະກິດແຫ່ງຊາດ ແລະ ການພັດທະນາເສດຖະກິດຕາມເຂດແຄວ້ນ;
4. ຕິດຕາມ, ປະເມີນທ່າອ່ຽງ ແລະ ຄວາມສ່ຽງໃນການຂະຫຍາຍຕົວເສດຖະກິດໃນແຕ່ລະໄລຍະທັງໄລຍະສັ້ນ, ໄລຍະກາງ ແລະ ຍາວ;
5. ຄົ້ນຄວ້ານະໂຍບາຍຫັນປ່ຽນໂຄງປະກອບເສດຖະກິດ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ເສດຖະກິດເອກະລາດ ແລະ ເປັນເຈົ້າຕົນເອງ;

6. ຄົ້ນຄວ້າການພັດທະນາແລວທາງເສດຖະກິດ, ເຂດຈຸດສຸມການພັດທະນາ, ເຂດເສດຖະກິດພິເສດ, ແລະ ຕິດຕາມປະສິດທິຜົນຕໍ່ການຂະຫຍາຍຕົວເສດຖະກິດແຫ່ງຊາດ ແລະ ທ້ອງຖິ່ນ;
7. ປະສານສົມທົບກັບບັນດາກົມອ້ອມຂ້າງຂອງກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຮ່ວມກັບ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ກ່ຽວກັບວຽກງານນະໂຍບາຍການເງິນ ແລະ ການປະເມີນສະພາບເສດຖະກິດ-ການເງິນຂອງ ສປປ ລາວ ໃນແຕ່ລະໄລຍະ;
8. ເປັນໃຈກາງພົວພັນ, ຮ່ວມມື, ປະສານງານ ກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງ, ສະຖາບັນການເງິນສາກົນ ແລະ ພາກພື້ນ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າທາງດ້ານວິຊາການ;
9. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
10. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 8 ພະແນກ ນະໂຍບາຍສະເຖຍລະພາບເສດຖະກິດມະຫາພາກ**

ພະແນກ ນະໂຍບາຍສະເຖຍລະພາບເສດຖະກິດມະຫາພາກ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
2. ສັງລວມ ແລະ ຕີລາຄາສະເຖຍລະພາບເສດຖະກິດມະຫາພາກໃນແຕ່ລະໄລຍະ ແລະ ຄາດຄະເນສະພາບສະເຖຍລະພາບເສດຖະກິດມະຫາພາກ ໃນໄລຍະສັ້ນ, ກາງ ແລະ ຍາວ ເຊັ່ນ: ອັດຕາເງິນເຟີ້, ອັດຕາແລກປ່ຽນ, ດຸ່ນງົບປະມານ, ດຸ່ນການຄ້າຕ່າງປະເທດ, ດຸ່ນທຶນ ແລະ ດຸ່ນແຮງງານ ແລະ ອື່ນໆ;
3. ສ້າງ ແລະ ນຳໃຊ້ແບບຈຳລອງເສດຖະກິດມະຫາພາກ ຮ່ວມກັບຂະແໜງທີ່ກ່ຽວຂ້ອງ;
4. ຄົ້ນຄວ້າ ແລະ ຕີລາຄາສະພາບເສດຖະກິດສາກົນ ແລະ ພາກພື້ນ ສະໜອງຂໍ້ມູນໃນການສ້າງນະໂຍບາຍ, ການສະໜັບສະໜູນໃຫ້ການວາງແຜນພັດທະນາເສດຖະກິດ ແລະ ຄຸ້ມຄອງເສດຖະກິດມະຫາພາກ;
5. ສ້າງບົດລາຍງານຫຍໍ້ສະພາບເສດຖະກິດມະຫາພາກ ປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ເພື່ອລາຍງານຕໍ່ຄະນະນຳກະຊວງ ແລະ ລັດຖະບານ;
6. ຄົ້ນຄວ້າ ແລະ ສ້າງມາດຕະການແກ້ໄຂໃນຫົວຂໍ້ຕ່າງໆທີ່ຕິດພັນກັບການຄຸ້ມຄອງສະເຖຍລະພາບເສດຖະກິດມະຫາພາກ ໃນແຕ່ລະໄລຍະ ຕາມການມອບໝາຍຂອງຄະນະນຳກະຊວງ;
7. ປະສານສົມທົບກັບບັນດາກົມອ້ອມຂ້າງຂອງກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຮ່ວມກັບ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ກ່ຽວກັບວຽກງານນະໂຍບາຍການເງິນ ແລະ ການປະເມີນສະພາບເສດຖະກິດ-ການເງິນຂອງ ສປປ ລາວ ໃນແຕ່ລະໄລຍະ;
8. ເປັນໃຈກາງພົວພັນ, ຮ່ວມມື, ປະສານງານ ກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງ, ສະຖາບັນການເງິນສາກົນ ແລະ ພາກພື້ນ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າທາງດ້ານວິຊາການ;
9. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
10. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
11. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 9 ພະແນກ ນະໂຍບາຍການພັດທະນາ**

ພະແນກ ນະໂຍບາຍການພັດທະນາ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;

2. ຄົ້ນຄວ້ານະໂຍບາຍໃນການສະໜັບສະໜູນການສ້າງຍຸດທະສາດການພັດທະນາຂອງຂະແໜງເສດຖະກິດໄລຍະ ກາງ ແລະ ຍາວ ເພື່ອເປັນຂໍ້ມູນໃຫ້ການສ້າງແຜນ ແລະ ຕິດຕາມການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;
3. ຄົ້ນຄວ້າ ແລະ ປະເມີນການພັດທະນາເສດຖະກິດແບບຍືນຍົງ, ການເຕີບໂຕສີຂຽວ, ການພັດທະນາທຶນມະນຸດ, ປະຊາກອນແລະການພັດທະນາ, ການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ ແລະ ອື່ນໆ ເພື່ອສະໜັບສະໜູນການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການເງິນແຫ່ງລັດ;
4. ຄົ້ນຄວ້າ ແລະ ປະເມີນປະສິດທິຜົນ ແລະ ປະສິດທິພາບຕໍ່ການພັດທະນາເສດຖະກິດຂອງບັນດາໂຄງການພັດທະນາຂະໜາດໃຫຍ່ທີ່ນຳໃຊ້ແຫຼ່ງທຶນງົບປະມານ ແລະ ແຫລ່ງທຶນອື່ນໆຈາກສາກົນ;
5. ຄົ້ນຄວ້ານະໂຍບາຍ ແລະ ມາດຕະການການພັດທະນາເສດຖະກິດຕິດພັນກັບການແກ້ໄຂຄວາມທຸກຍາກ ແລະ ການກະຈາຍລາຍໄດ້;
6. ປະສານສົມທົບກັບບັນດາກົມອ້ອມຂ້າງຂອງກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຮ່ວມກັບ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ກ່ຽວກັບວຽກງານນະໂຍບາຍການເງິນ ແລະ ການປະເມີນສະພາບເສດຖະກິດ-ການເງິນຂອງ ສປປ ລາວ ໃນແຕ່ລະໄລຍະ;
7. ເປັນໃຈກາງພົວພັນ, ຮ່ວມມື, ປະສານງານ ກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງ, ສະຖາບັນການເງິນສາກົນ ແລະ ພາກພື້ນ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າທາງດ້ານວິຊາການ;
8. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
9. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
10. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 10 ພະແນກ ນະໂຍບາຍການເງິນ**

ພະແນກ ນະໂຍບາຍການເງິນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ວິໄສທັດ, ຍຸດທະສາດ, ແຜນພັດທະນາ ແລະ ແຜນປະຕິຮູບ ຂະແໜງການເງິນ ເພື່ອສະເໜີຫົວໜ້າກົມ ພິຈາລະນາ;
3. ຄົ້ນຄວ້າ, ສ້າງ ແລະ ປັບປຸງນະໂຍບາຍການເງິນ ແລະ ຂອບການເງິນມະຫາພາກ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ລວມທັງນະໂຍບາຍປະຢັດ ແລະ ສະສົມທົ່ວສັງຄົມ ເພື່ອສະເໜີຫົວໜ້າກົມ ພິຈາລະນາ;
4. ຄົ້ນຄວ້າ, ສ້າງ, ຕິດຕາມ ແລະ ປະເມີນ ການພັດທະນາການຄຸ້ມຄອງການເງິນແຫ່ງລັດສີຂຽວ;
5. ປະສານສົມທົບກັບບັນດາກົມຂອງກະຊວງການເງິນ ເພື່ອຕິດຕາມການຈັດຕັ້ງປະຕິບັດບັນດາໜ້າວຽກທີ່ກຳນົດໄວ້ໃນ ແຜນຍຸດທະສາດພັດທະນາການເງິນແຫ່ງລັດ ໃນແຕ່ລະໄລຍະ;
6. ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດຍຸດທະສາດພັດທະນາການເງິນແຫ່ງລັດ, ແຜນພັດທະນາ ແລະ ແຜນປະຕິຮູບ ຂະແໜງການເງິນ ເພື່ອລາຍງານຫົວໜ້າກົມ ໃນແຕ່ລະໄລຍະ;
7. ໃຫ້ຄຳປຶກສາ, ເຂົ້າຮ່ວມ ວິໄຈ ແລະ ມີຄຳເຫັນ ຢັ້ງຢືນທາງດ້ານວິທະຍາສາດເສດຖະກິດ-ການເງິນໃນການວາງວິໄສທັດ, ຍຸດທະສາດ ແລະ ແຜນພັດທະນາຂອງກົມລາຍຮັບ-ລາຍຈ່າຍ ແລະ ຂອງກົມປີ່ນອ້ອມ ຕາມວິໄສທັດ ແລະ ຍຸດທະສາດພັດທະນາການເງິນແຫ່ງລັດ;
8. ປະສານສົມທົບກັບບັນດາກົມອ້ອມຂ້າງຂອງກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຮ່ວມກັບ ຄູ່ຮ່ວມພັດທະນາ, ອົງການຈັດຕັ້ງສາກົນ ແລະ ສະຖາບັນການເງິນສາກົນ ກ່ຽວກັບວຽກງານນະໂຍບາຍການເງິນ ແລະ ການປະເມີນສະພາບເສດຖະກິດ-ການເງິນຂອງ ສປປ ລາວ ໃນແຕ່ລະໄລຍະ;
9. ເປັນໃຈກາງພົວພັນ, ຮ່ວມມື, ປະສານງານ ກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງ, ສະຖາບັນການເງິນສາກົນ ແລະ ພາກພື້ນ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າທາງດ້ານວິຊາການ;

10. ຕິດຕາມ, ວິເຄາະ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍ ແລະ ມາດຕະການ ວຽກງານການເງິນ ເພື່ອສະເໜີຫົວໜ້າກົມ ພິຈາລະນາ;
11. ຄຸ້ມຄອງ, ນຳໃຊ້, ປັບປຸງຂໍ້ມູນ ແລະ ພັດທະນາ ລະບົບຄຸ້ມຄອງຖານຂໍ້ມູນພະນັກງານ-ລັດຖະກອນ ພາຍໃຕ້ການຄຸ້ມຄອງຂອງກົມ ໃນແຕ່ໄລຍະ ຕາມການແບ່ງຂັ້ນຄຸ້ມຄອງ;
12. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 11 ພະແນກ ນະໂຍບາຍລາຍຮັບ**

ພະແນກ ນະໂຍບາຍລາຍຮັບ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
2. ຄົ້ນຄ້ວາ, ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ມາດຕະການໃນຂົງເຂດລາຍຮັບງົບປະມານແຫ່ງລັດ ແລະ ໃຫ້ຄຳແນະນຳທາງດ້ານວິຊາການ ຢ່າງເປັນລະບົບ;
3. ຄົ້ນຄວ້າ, ສ້າງ ກົນໄກ ແລະ ປັບປຸງ ນະໂຍບາຍລາຍຮັບງົບປະມານແຫ່ງລັດ ຈາກ ຂະແໜງພະລັງງານໄຟຟ້າ, ຂະແໜງບໍ່ແຮ່, ຂະແໜງຊັບສິນດິຈິຕອນ ແລະ ຂະແໜງອື່ນທີ່ເປັນທ່າແຮງ ເພື່ອສະເໜີຫົວໜ້າກົມພິຈາລະນາ;
4. ຕິດຕາມ, ວິເຄາະ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດນະໂຍບາຍລາຍຮັບ ແລະ ມາດຕະການວຽກງານຈັດເກັບລາຍຮັບ ເພື່ອສະເໜີຫົວໜ້າກົມ ພິຈາລະນາ;
5. ເຂົ້າຮ່ວມຄົ້ນຄວ້າ ສ້າງ ແລະ ປັບປຸງ ບົດສະເໜີແຜນງົບປະມານແຫ່ງລັດ ທີ່ກ່ຽວຂ້ອງກັບ ນະໂຍບາຍລາຍຮັບ ແລະ ແຜນລາຍຮັບງົບປະມານແຫ່ງລັດ ຫ້າປີ;
6. ສ້າງ ບົດລາຍງານ ຄົ້ນຄວ້ານະໂຍບາຍລາຍຮັບງົບປະມານແຫ່ງລັດ ໃຫ້ສອດຄ່ອງກັບສະພາບຕົວຈິງທາງດ້ານງົບປະມານແຫ່ງລັດ ໃນແຕ່ລະໄລຍະ;
7. ເຂົ້າຮ່ວມຄົ້ນຄວ້າ ແລະ ສ້າງ ຂອບລາຍຮັບງົບປະມານແຫ່ງລັດ ໄລຍະກາງ-ໄລຍະຍາວ ເພື່ອຮັບປະກັນຄວາມໝັ້ນທ່ຽງທາງດ້ານການເງິນ-ງົບປະມານ ແລະ ສອດຄ່ອງກັບຂອບການເງິນມະຫາພາກ;
8. ເຂົ້າຮ່ວມຄົ້ນຄວ້າ ແລະ ສ້າງ ແບບຈຳລອງການຄາດຄະເນແຜນງົບປະມານແຫ່ງລັດ 05 ປີ ໃນແຕ່ລະໄລຍະ;
9. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນຖານລາຍຮັບ ເພື່ອນຳມາວິເຄາະ, ວິໄຈ, ກຳນົດ ນະໂຍບາຍລາຍຮັບ ແລະ ມາດຕະການແກ້ໄຂ ໃນແຕ່ລະໄລຍະ;
10. ເຂົ້າຮ່ວມຄົ້ນຄວ້າກົນໄກການແບ່ງຂັ້ນຄຸ້ມຄອງ ແລະ ເກັບລາຍຮັບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງກັບນະໂຍບາຍລັດຖະບານ ໃນແຕ່ລະໄລຍະ;
11. ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ປະເມີນ ຜົນກະທົບນິຕິກຳ ໃນຂົງເຂດລາຍຮັບ ຂອງຂະແໜງການເງິນເພື່ອສະເໜີຫົວໜ້າກົມ ພິຈາລະນາ;
12. ຄົ້ນຄວ້າ, ວິເຄາະ, ວິໄຈ ແລະ ກຳນົດນະໂຍບາຍລາຍຮັບງົບປະມານ (ການຄົ້ນຄວ້າກຳນົດອັດຕາອາກອນ, ການຂະຫຍາຍຖານລາຍຮັບ ແລະ ອື່ນໆ) ໃຫ້ສອດຄອງກັບສະພາບເສດຖະກິດ-ສັງຄົມ;
13. ຄົ້ນຄວ້ານະໂຍບາຍ ຫຼຸດຜ່ອນ ຫຼື ຍົກເວັ້ນ ດ້ານພາສີ-ອາກອນ ແລະ ອື່ນໆ ໃຫ້ໄປຕາມບູລິມາສິດຂອງລັດຖະບານໃນແຕ່ລະໄລຍະ ເພື່ອສາມາດ ປະເມີນ, ວິເຄາະ ແລະ ວິໄຈ ການໃຫ້ນະໂຍບາຍສົ່ງເສີມໃຫ້ສອດຄ່ອງກັບບູລິມາສິດ;
14. ຄົ້ນຄວ້າວິເຄາະ-ວິໄຈການສູນເສຍລາຍຮັບທາງດ້ານພາສີ-ອາກອນ (Tax Expenditure: TE) ລວມທັງການຄົ້ນຄວ້າວິເຄາະວິໄຈ ຜົນໄດ້ ແລະ ຜົນເສຍ ຂອງການໃຫ້ນະໂຍບາຍສົ່ງເສີມທາງດ້ານພາສີ-ອາກອນ;
15. ເປັນເຈົ້າການຄົ້ນຄວ້າ ແລະ ກຳນົດນະໂຍບາຍທາງດ້ານພາສີ-ອາກອນ ແລະ ນະໂຍບາຍທີ່ບໍ່ແມ່ນພາສີ-ອາກອນ ເພື່ອສົ່ງເສີມການລົງທຶນເອກະຊົນ ພາຍໃນ ແລະ ຕ່າງປະເທດ, ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;

16. ຄຸ້ມຄອງການປະຕິບັດນະໂຍບາຍທາງດ້ານພາສີ-ອາກອນ ແລະ ນະໂຍບາຍທີ່ບໍ່ແມ່ນພາສີ-ອາກອນ ທີ່ຕິດພັນກັບນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ລວມທັງ ການຄຸ້ມຄອງການປະຕິບັດນະໂຍບາຍທີ່ນອກເໜືອຈາກກົດໝາຍກຳນົດ;
17. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
18. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 12 ພະແນກ ນະໂຍບາຍລາຍຈ່າຍ**

ພະແນກ ນະໂຍບາຍລາຍຈ່າຍ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;
2. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ມາດຕະການ ລາຍຈ່າຍງົບປະມານແຫ່ງລັດ ແລະ ການລົງທຶນຂອງລັດ ລວມທັງນະໂຍບາຍການປະຢັດ ແລະ ຕ້ານການຟຸມເຟືອຍ ເພື່ອສະເໜີຫົວໜ້າກົມພິຈາລະນາ ໃນແຕ່ລະໄລຍະ;
3. ຕິດຕາມ, ວິເຄາະ, ປະເມີນ ແລະ ຕີລາຄາບັນດານະໂຍບາຍ ແລະ ມາດຕະການທາງດ້ານລາຍຈ່າຍງົບປະມານແຫ່ງລັດ ໂດຍສະເພາະ ການສຶກສາ, ສາທາລະນະສຸກ, ແຮງງານ, ໂພຊະນາການ, ບົດບາດຍິງ-ຊາຍ, ຊາວໜຸ່ມ, ເຍົາວະຊົນ, ເດັກນ້ອຍ ແລະ ອື່ນໆ;
4. ຄົ້ນຄວ້າ ສ້າງ ແລະ ປັບປຸງ ບົດສະເໜີແຜນງົບປະມານແຫ່ງລັດ ທີ່ກ່ຽວຂ້ອງກັບ ນະໂຍບາຍລາຍຈ່າຍ ແລະ ແຜນລາຍຈ່າຍງົບປະມານແຫ່ງລັດ ຫ້າປີ;
5. ຄົ້ນຄວ້າ, ສ້າງ ແລະ ປັບປຸງ ນະໂຍບາຍລາຍຈ່າຍຂອງ ພະນັກງານ-ລັດຖະກອນ, ພະນັກງານອາວຸໂສບຳນານ ແລະ ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຂົງເຂດອື່ນ ເປັນຕົ້ນ: ເງິນເດືອນ, ເງິນອຸດໜູນ, ເງິນປະກັນສັງຄົມ ແລະ ເງິນນະໂຍບາຍອື່ນ ເພື່ອສະເໜີຫົວໜ້າກົມພິຈາລະນາ;
6. ຄົ້ນຄວ້າ ສ້າງ ກົນໄກ ແລະ ນະໂຍບາຍລາຍຈ່າຍທີ່ຕິດພັນກັບຂະແໜງບູລິມະສິດຕາມນະໂຍບາຍຂອງລັດຖະບານ ໃນແຕ່ລະໄລຍະ;
7. ສ້າງ ບົດລາຍງານ ຄົ້ນຄວ້ານະໂຍບາຍລາຍຈ່າຍງົບປະມານແຫ່ງລັດ ໃຫ້ສອດຄ່ອງກັບສະພາບຕົວຈິງທາງດ້ານງົບປະມານແຫ່ງລັດ ໃນແຕ່ລະໄລຍະ;
8. ເຂົ້າຮ່ວມຄົ້ນຄວ້າ ແລະ ສ້າງ ແບບຈຳລອງການຄາດຄະເນແຜນງົບປະມານແຫ່ງລັດ 05 ປີ ໃນແຕ່ລະໄລຍະ;
9. ເຂົ້າຮ່ວມຄົ້ນຄວ້າ ແລະ ສ້າງ ຂອບລາຍຈ່າຍງົບປະມານແຫ່ງລັດ ໄລຍະກາງ-ໄລຍະຍາວ ເພື່ອຮັບປະກັນຄວາມໝັ້ນທ່ຽງທາງດ້ານການເງິນ-ງົບປະມານ, ສອດຄ່ອງກັບຂອບການເງິນມະຫາພາກ;
10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເກັບກຳຂໍ້ມູນໃນການປະຕິບັດລາຍຈ່າຍງົບປະມານແຫ່ງລັດ ເພື່ອນຳມາວິເຄາະ, ວິໄຈ, ວາງນະໂຍບາຍ ແລະ ມາດຕະການແກ້ໄຂ ໃນແຕ່ລະໄລຍະ;
11. ເຂົ້າຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າສ້າງນະໂຍບາຍການຈັດສັນລາຍຈ່າຍງົບປະມານແຫ່ງລັດ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ;
12. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງພະແນກ ປະຈຳ ເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
13. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

**ມາດຕາ 13 ພະແນກຂໍ້ມູນ-ສະຖິຕິ ເສດຖະກິດ ແລະ ການເງິນ**

ພະແນກຂໍ້ມູນ-ສະຖິຕິ ເສດຖະກິດ ແລະ ການເງິນ ມີໜ້າທີ່ດັ່ງນີ້:

1. ຄົ້ນຄວ້າກຳແໜ້ນ ແລະ ຈັດຕັ້ງປະຕິບັດ ແນວທາງຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍຂອງລັດ;

2. ເກັບກຳ, ສັງລວມ ແລະ ສ້າງຖານຂໍ້ມູນ ສະຖິຕິການເງິນແຫ່ງລັດ ແລະ ຕົວເລກເສດຖະກິດມະຫາພາກ ໃນການພັດທະນາເສດຖະກິດ-ສັງຄົມ ຕາມການເໜັງຕີງເສດຖະກິດພາຍໃນ ໃນແຕ່ລະໄລຍະ;
3. ສັງລວມ ແລະ ສ້າງຂໍ້ມູນສະຖິຕິດ້ານເສດຖະກິດ ເພື່ອຮັບໃຊ້ໃນການຕິດຕາມ ແລະ ກຳນົດຄາດໝາຍການຂະຫຍາຍຕົວຂອງເສດຖະກິດ, ຂະແໜງການເສດຖະກິດ, ການເງິນ ແລະ ເງິນຕາ ແລະ ອື່ນໆ ເພື່ອຮັບໃຊ້ການສ້າງ ແລະ ຕິດຕາມນະໂຍບາຍ ແລະ ມາດຕະການການພັດທະນາເສດຖະກິດ ແລະ ການເງິນແຫ່ງລັດ;
4. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ຂໍ້ມູນຕົວເລກການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ, ການຄຸ້ມຄອງເສດຖະກິດ ແລະ ງົບປະມານແຫ່ງລັດ ເພື່ອສະເໜີຫົວໜ້າກົມ ພິຈາລະນາ ເປັນແຕ່ລະໄລຍະ;
5. ສ້າງ ບົດລາຍງານ ສະຖິຕິການເງິນແຫ່ງລັດ ປະຈຳງວດ ແລະ ປະຈຳປີ ຕາມມາດຖານສາກົນ, ປຶ້ມຈົດໝາຍເຫດສະຫຼຸບ ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ ແລະ ຈັດພິມເຜີຍແຜ່ ຕໍ່ພາຍນອກ ຕາມລະບຽບການ;
6. ເຂົ້າຮ່ວມ ຄົ້ນຄວ້າ, ຄາດຄະເນ ຕົວເລກເສດຖະກິດມະຫາພາກ ກັບພາກສ່ວນອື່ນກ່ຽວຂ້ອງທັງພາຍໃນ ແລະ ພາຍນອກ;
7. ເຂົ້າຮ່ວມຄົ້ນຄວ້າ ສ້າງ ແລະ ປັບປຸງ ແຜນງົບປະມານແຫ່ງລັດ ໄລຍະກາງ ສູນສະຖິຕິແຫ່ງຊາດ, ບັນດາກົມ ແລະ ທຽບເທົ່າກົມອ້ອມຂ້າງກະຊວງການເງິນ;
8. ຄົ້ນຄວ້າ, ສັງລວມ ແລະ ສະເໜີ ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ ແລະ ມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ, ການບັນຈຸສັບຊ້ອນ, ແຕ່ງຕັ້ງ, ໂຍກຍ້າຍ, ປະເມີນຜົນ, ກໍ່ສ້າງ-ບຳລຸງ, ຝຶກອົບຮົມ-ພັດທະນາ ແລະ ປະຕິບັດນະໂຍບາຍ ຍ້ອງຍໍ ແລະ ວິໄນ ພະນັກງານ-ລັດຖະກອນ ເພື່ອສະເໜີຫົວໜ້າກົມພິຈາລະນາ;
9. ເກັບກຳຊີວະປະຫວັດ ແລະ ສັງລວມສະຖິຕິ ພະນັກງານ-ລັດຖະກອນ ຕາມລະບຽບການ;
10. ຄົ້ນຄວ້າ, ສັງລວມ, ສ້າງແຜນ, ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ພາຫະນະ, ວັດຖຸປະກອນ, ຊັບສົມບັດຂອງລັດ ແລະ ຊັບສິນອື່ນຂອງກົມຕາມການແບ່ງປັນຂອງກະຊວງການເງິນ ຕາມລະບຽບການ;
11. ຄຸ້ມຄອງ, ຕິດຕາມ ເອກະສານຂາເຂົ້າ-ຂາອອກ ໃຫ້ລວມສູນ ແລະ ລະບົບ I-Office, ຄຸ້ມຄອງຕາປະທັບ, ສຳເນົາ, ແຈກຈ່າຍ ແລະ ນຳສົ່ງເອກະສານ, ຄົ້ນຄວ້າສັງລວມ ແລະ ຕິດຕາມບັນດາເອກະສານເຂົ້າ-ອອກຕ່າງໆ;
12. ເປັນໃຈກາງພົວພັນ, ຮ່ວມມື, ປະສານງານ ກັບຄູ່ຮ່ວມພັດທະນາ, ອົງການຈັດຕັ້ງ, ສະຖາບັນການເງິນສາກົນ ແລະ ພາກພື້ນ ໃນການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອລ້າທາງດ້ານວິຊາການ ແລະ ວຽກງານຄຸ້ມຄອງໂຄງການໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີ;
13. ສ້າງແຜນດຳເນີນງານ ແລະ ສະຫຼຸບລາຍງານການ ເຄື່ອນໄຫວວຽກງານຂອງກົມ ແລະ ພະແນກ ປະຈຳເດືອນ, 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕາມລະບຽບການ;
14. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະກົມ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 14 ຫຼັກການ

1. ປະຕິບັດຫຼັກການ ລວມສູນປະຊາທິປະໄຕ, ລະບອບຫົວໜ້າດຽວ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ;
2. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ ແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຫຼັກການລວມຂອງພັກ-ລັດຖະບານ;
3. ນຳເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ, ແຜນ 05 ປີ ແລະ ແຜນການປະຈຳປີ ຂອງກະຊວງການເງິນ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ ແລະ ມີປະສິດທິພາບ;
4. ຮັບຜິດຊອບຕໍ່ຜົນໄດ້-ຜົນເສຍ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ.

**ມາດຕາ 15 ແບບແຜນວິທີເຮັດວຽກ**

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ ລະອຽດ; ມີການວາງແຜນທິດທາງ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ;
2. ມີກົນໄກ, ວິທີການ ປະສານສົມທົບແໜ້ນກັບຂະແໜງການເງິນ ແລະ ພາກສ່ວນທີ່ພົວພັນເຖິງໜ້າທີ່ວຽກງານຂອງຕົນ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ພ້ອມທັງ ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດ ແລະ ພັດທະນາຂົງເຂດວຽກງານຂອງກົມໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິຜົນ;
3. ເຮັດວຽກມີການຕິດຕາມ, ກວດກາ, ຊຸກຍູ້, ສະຫຼຸບ, ຖອດຖອນບົດຮຽນ, ປະເມີນຜົນ, ຕີລາຄາຜົນໄດ້-ຜົນເສຍ ໃນການຈັດຕັ້ງປະຕິບັດວຽກງານຂອງຕົນ ບົນພື້ນຖານການປະຕິບັດລະບອບປະຊຸມສ່ອງແສງລາຍງານຢ່າງເປັນປົກກະຕິ;
4. ປະຕິບັດລະບອບປະຊຸມ ປະຈຳ ເດືອນ, 03 ເດືອນ, 06 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານ ໃຫ້ລັດຖະມົນຕີ ຢ່າງເປັນປົກກະຕິ.

**ໝວດທີ 6**
**ບົດບັນຍັດສຸດທ້າຍ**

**ມາດຕາ 16 ງົບປະມານ ແລະ ຕາປະທັບ**

ກົມນະໂຍບາຍເສດຖະກິດ ແລະ ການເງິນ ມີ ງົບປະມານ ແລະ ຕາປະທັບ ຂອງຕົນ ເພື່ອຮັບໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 17 ການຈັດຕັ້ງປະຕິບັດ**

ກົມນະໂຍບາຍເສດຖະກິດ ແລະ ການເງິນ, ສູນສະຖິຕິແຫ່ງຊາດ, ກົມຈັດຕັ້ງ, ບັນດາກົມ ແລະ ທຽບເທົ່າກົມ, ສະຖາບັນ, ຫ້ອງການຄະນະກຳມະການຮ່ວມມື (ລາວ-ຫວຽດນາມ ແລະ ລາວ-ຈີນ), ລັດວິສາຫະກິດທີ່ຂຶ້ນກັບກະຊວງການເງິນ; ພະແນກການເງິນແຂວງ, ນະຄອນຫຼວງ; ຫ້ອງການການເງິນເມືອງ, ນະຄອນ; ຂະແໜງສາຍຕັ້ງ (ພາສີ, ສ່ວຍສາອາກອນ, ຄັງເງິນ) ຢູ່ຂັ້ນທ້ອງຖິ່ນ, ທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ນຳໃຊ້ປ່ຽນແທນ ຂໍ້ຕົກລົງ ສະບັບເລກທີ 6178/ກງ, ລົງວັນທີ 16 ທັນວາ 2021 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ກະຊວງການເງິນ
ລັດຖະມົນຕີ

**ສັນຕິພາບ ພົມວິຫານ**